ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 24 /ລບ

ນະຄອນຫຼວງວຽງຈັນ, ວັນທີ 16.01.2017.

# ດຳລັດ
## ວ່າດ້ວຍການສຶກສາສົງ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ( ສະບັບປັບປຸງ ) ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມກົດໝາຍວ່າດ້ວຍການສຶກສາ ( ສະບັບປັບປຸງ ) ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມໜັງສືສະເໜີຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1540/ ສສກ.ຈຕ,ລົງວັນທີ 28 ຕຸລາ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງຍຸຕິທຳ ສະບັບເລກທີ 1065/ກຍ, ລົງວັນທີ 17 ພະຈິກ 2016.

## ລັດຖະບານ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມກວດກາວຽກງານສຶກສາສົງໃຫ້ມີຄຸນນະພາບ ແລະ ກ້າວໜ້າ ເພື່ອພັດທະນາພຣະສົງ, ສາມະເນນ ແລະ ອຸປາສົກ-ອຸປາສິກາ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ສະຕິປັນຍາທາງພຸດທະສາສະໜາ, ວິທະຍາ ສາດທຳມະຊາດ, ວິທະຍາສາດສັງຄົມ; ໃຫ້ກາຍເປັນພົນລະເມືອງດີ, ມີສິນທຳ, ຈະຣິຍະທຳ ແລະ ຄຸນນະທຳ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 : ການສຶກສາສົງ**

ການສຶກສາສົງ ແມ່ນຂະບວນການສອນ, ການຮຽນຮູ້ ທາງພຸດທະສາສະໜາ, ວິທະຍາສາດທຳມະຊາດ, ວິທະຍາສາດສັງຄົມ, ພຶດຕິກຳສາດ,ພາສາ ແລະ ອັກສອນສາດ.

ມາດຕາ 3: ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ບັນພະຊິດ** ໝາຍເຖິງ ນັກບວດ;
2. **ຄະຣືຫັດ** ໝາຍເຖິງ ອອກຕົນຍາດໂຍມ ຜູ້ບໍ່ແມ່ນນັກບວດ;
3. **ຜູ້ບໍລິຫານການສຶກສາສົງ** ໝາຍເຖິງຫົວໜ້າ ແລະ ຮອງຫົວໜ້າກຳມາທິການສຶກສາສົງຂັ້ນ ຕ່າງໆ, ຫົວໜ້າ ແລະ ຮອງຫົວໜ້າສະຖານການສຶກສາສົງ;
4. **ເງິນນິດຈະພັດ** ໝາຍເຖິງເງິນທີ່ເບີກຈ່າຍເປັນປົກກະຕິໃນແຕ່ລະເດືອນ ໃຫ້ແກ່ບັນພະຊິດທີ່ເປັນຄູ ແລະ ບຸກຄະລາກອນການສຶກສາສົງ;
5. **ການສຶກສາສາຍປະຣິຍັດຕິທຳ** ໝາຍເຖິງ ການຮຽນການສອນກ່ຽວກັບພຸດທະສາສະໜາ ເປັນຕົ້ນຕໍ.
6. **ການສຶກສາສາຍສາມັນສຶກສາສົງ** ໝາຍເຖິງການຮຽນການສອນ ແບບປະສົມປະສານລະຫວ່າງພຸດທະສາສະໜາກັບສາຍສາມັນທາງໂລກ;
7. **ການສຶກສາບັນດິດວິທະຍາ** ໝາຍເຖິງການສຶກສາພາຍຫຼັງຮຽນຈົບສາຍປະຣິຍັດຕິທຳ ແລະ ສາຍສາມັນສຶກສາສົງ;
8. **ສາສະນະກິດ** ໝາຍເຖິງວຽກງານທາງສາສະໜາ;
9. **ລັດຖະກິດ** ໝາຍເຖິງວຽກງານທາງລັດຖະການ;
10. **ອຸປາສົກ** ໝາຍເຖິງ ພໍ່ອອກ;
11. **ອຸປາສິກາ** ໝາຍເຖິງ ແມ່ອອກ;
12. **ພຣະພິກຂຸ** ໝາຍເຖິງ ນັກບວດທີ່ຖືສິນສອງຮ້ອຍຊາວເຈັດ;
13. **ສາມະເນນ** ໝາຍເຖິງ ນັກບວດທີ່ຖືສິນສິບ;
14. **ພໍ່ຂາວ** ໝາຍເຖິງ ຜູ້ຊາຍທີ່ເປັນນັກບວດທີ່ຖືສິນແປດ;
15. **ແມ່ຂາວ** ໝາຍເຖິງຜູ້ຍິງທີ່ເປັນນັກບວດທີ່ຖືສິນແປດ;
16. **ສາສະນິກະຊົນ** ໝາຍເຖິງຜູ້ທີ່ເຫຼື້ອມໃສໃນສາສະໜາ;
17. **ພຣະທຳມະ** ໝາຍເຖິງ ຫຼັກຄຳສອນທີ່ເປັນເຫດ ແລະ ເປັນຜົນ;
18. **ພຣະວິໄນ** ໝາຍເຖິງ ລະບຽບຂອງບັນພະຊິດໃນພຸດທະສາສະໜາ.

ມາດຕາ 4: ນະໂຍບາຍຂອງລັດກ່ຽວກັບວຽກງານການສຶກສາສົງ

ລັດກຳນົດເອົາການສຶກສາສົງ ເປັນສ່ວນໜຶ່ງຂອງລະບົບການສຶກສາແຫ່ງຊາດ ໃນການພັດທະນາຊັບພະຍາກອນມະນຸດ.

ລັດ ສົ່ງເສີມວຽກງານການສຶກສາສົງ ດ້ວຍການປະກອບບຸກຄະລາກອນ, ສະໜອງງົບປະມານ, ກໍ່ສ້າງພື້ນຖານໂຄງລ່າງ, ມີນະໂຍບາຍຕໍ່ຄູ ແລະ ບຸກຄະລາກອນການສຶກສາສົງ ຕາມລະບຽບ ການ.

ລັດ ສົ່ງເສີມ ແລະ ຊຸກຍູ້ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາການສຶກສາສົງ ຕາມກົດໝາຍ ແລະ ນະໂຍບາຍຂອງລັດຖະບານ.

ມາດຕາ 5 : ຫຼັກການ ການເຄື່ອນໄຫວວຽກງານການສຶກສາສົງ

ວຽກງານການສຶກສາສົງ ຕ້ອງເຄື່ອນໄຫວຕາມຫຼັກການພື້ນຖານ ດັ່ງນີ້:

1. ປະຕິບັດຕາມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ແຜນນະໂຍບາຍຂອງ ອົງການພຸດທະສາສະໜາສຳພັນລາວ;